ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການກະຊວງ

ເລກທີ 2643/ຫກ.ກຄຖ

ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2023

## ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍຕາງໜ້າກົມຄຸ້ມຄອງຄວາມຖີ່ວິທະຍຸສື່ສານ ຊຶ່ງໄດ້ຮັບອະນຸມັດງົບປະມານ ລົງທຶນຂອງລັດ ປະຈຳປີ 2023: ໂຄງການສ້ອມແປງ ແລະ ປ່ຽນຖ່າຍອຸປະກອນກວດກາຄຸ້ມຄອງຄວາມຖີ່ວິທະຍຸສື່ສານ ທີ່ຊຳຫລຸດ ແລະ ເປ່ເພ ບ້ວງຈັດຊື້ ເຄື່ອງຈັກ ແລະ ວັດຖຸອຸປະກອນ (ບ້ວງ66) ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ດັ່ງນັ້ນ. ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ທີ່ດຳເນີນກິດຈະການດ້ານການນຳເຂົ້າອຸປະກອນໂທລະຄົມມະນາຄົມເຂົ້າຮ່ວມການປະມູນ. ກຳນົດມອບຮັບສິນຄ້າ 21 ວັນ ພາຍຫຼັງເຈົ້າຂອງໂຄງການອອກເອກະສານສັ່ງຊື້;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງອຸປະກອນໂທລະຄົມມະນາຄົມ ແລະ ICT;
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ກົມຄຸ້ມຄອງຄວາມຖີ່ວິທະຍຸສື່ສານ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ຕັ້ງຢູ່: ບ້ານ ດົງໂພສີ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ ເບີໂທຕິດຕໍ່: 021 833006. ຂາຍຊອງປະມູນໃນລາຄາຊອງລະ **2.500.000 ກີບ (ສອງລ້ານຫ້າແສນກີບ)** ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ, ເລີ່ມຂາຍໃນວັນທີ **17 ຕຸລາ 2023** ຫາ ວັນທີ **07 ພະຈິກ 2023** (ໃນໂມງລັດຖະການ);
5. ຊອງປະມູນຕ້ອງສົ່ງກ່ອນເວລາ 13:30 ໂມງ ຂອງວັນທີ 08 ພະຈິກ 2023 ທີ່ຫ້ອງປະຊຸມຊັ້ນ...ຕຶກກະຊວງ ຕສ, ສີສະເກດ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 13:30 ໂມງ ຂອງ ວັນທີ 08 ພະຈິກ 2023 ໂດຍຊ້ອງໜ້າຄະນະກຳມະການການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ, ໜັງສືຄ້ຳປະກັນອອກໂດຍທະນາຄານ, ເຊັກ(ວີຊາ) ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ;

ຫົວໜ້າຫ້ອງການ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ອະລະໄຊ ດາລາລອຍ

ຕິດຕໍ່ພົວພັນ:

1. ນ. ສີໄວ ອຳພອນໄຊ 020 23544565



Scanned with CamScanner